**Skills on court enforcement**
**ທັກສະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 10

## Some lessons from the Republic of Vietnam on the skills of postponement, suspension, cancellation (termination)

## ບາງບົດຮຽນ ຂອງ ສສ ຫວຽດນາມ ກ່ຽວກັບທັກສະເລື່ອນ, ໂຈະ, ຍົກເລີກ (ຢຸດຕິ) ປະຕິບັດຄຳຕັດສິນຂອງສານ

### 1. ທັກສະເລື່ອນປະຕິບັດຄຳຕັດສິນຂອງສານຢູ່ ສສ ຫວຽດນາມ

**1) ກຳນົດບ່ອນອີງໃນການເລື່ອນ:**

**- ຜູ້ຖືກປະຕິບັດຄຳຕັດສິນຂອງສານເຈັບປ່ວຍ, ມີການຢັ້ງຢືນຈາກສະຖາບັນການແພດຂັ້ນເມືອງຂຶ້ນໄປ; ຖືກສູນເສຍ ຫຼື ຖືກຈຳກັດຄວາມອາດສາມາດທາງດ້ານການປະພຶດທາງແພ່ງຕາມຄຳຕົກລົງຂອງສານ ຊຶ່ງຜູ້ຖືກປະຕິບັດຄຳຕັດສິນຂອງສານບໍ່ສາມາດປະຕິບັດພັນທະຕາມຄຳຕັດສິນຂອງສານດ້ວຍຕົນເອງໄດ້:**

ໃນເວລາ ນຳໃຊ້ກຸ່ມບ່ອນອີງນີ້, ເພື່ອອອກຂໍ້ຕົກລົງເລື່ອນປະຕິບັດຄຳຕັດສິນຂອງສານ, ບັນດາອົງການປະຕິບັດຄຳຕັດສິນຂອງສານທາງແພ່ງຕ້ອງເອົາໃຈໃສ່ດັ່ງນີ້[1]:

**(i) ພັນທະທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານນອນໃນປະເພດພັນທະຕ້ອງປະຕິບັດດ້ວຍຕົນເອງ.**

ໃນສະພາບການຕົວຈິງຂະບວນການປະຕິບັດຄຳຕັດສິນຂອງສານ ຢູ່ຫວຽດນາມ, ຜູ້ຖືກປະຕິບັດຄຳຕັດສິນຂອງສານຕ້ອງປະຕິບັດຫຼາຍພັນທະທີ່ແຕກຕ່າງກັນ, ແຕ່ບັນດາປະເພດພັນທະຂອງຜູ້ຖືກປະຕິບັດຄຳຕັດ ສິນຂອງສານໄດ້ແບ່ງເປັນສອງກຸ່ມຕົ້ນຕໍດັ່ງນີ້:

+ ກຸ່ມພັນທະກ່ຽວພັນກັບຊັບສິນຄື: ພັນທະໃນການໃຊ້ແທນຄ່າເສຍຫາຍ, ພັນທະໃນການໃຊ້ໜີ້, ພັນ ທະໃນການມອບເຮືອນ, ໂອນສິດນຳໃຊ້ທີ່ດິນ;

+ ກຸ່ມພັນທະທີ່ບໍ່ຕິດພັນກັບຊັບສິນຄື: ພັນທະໃນການຂໍໂທດເປີດເຜີຍ, ພັນທະສືບຕໍ່ປະຕິບັດສັນຍາ, ພັນທະຜູກມັດຕ້ອງເປີດທາງທຽວ...ໃນກຸ່ມພັນທະນີ້, ມີປະເພດພັນທະທີ່ຕ້ອງແມ່ນຜູ້ຖືກປະຕິບັດເປັນຜູ້ປະຕິບັດ, ມີພັນທະທີ່ສາມາດໃຫ້ບຸກຄົນອື່ນປະຕິບັດແທນ.

**(ii) ຕ້ອງຮັບປະກັນຕາມຄວາມຮຽກຮ້ອງຕ້ອງການດັ່ງນີ້:**

+ ກ່ຽວກັບກໍລະນີຜູ້ຖືກປະຕິບັດຄຳຕັດສິນຂອງສານເຈັບປ່ວຍໜັກ, ຕ້ອງມີການຢັ້ງຢືນຂອງສະຖາບັນການແພດຂັ້ນເມືອງຂຶ້ນໄປ. ສະນັ້ນ, ຄັດຕິດຂໍ້ຕົກລົງເລື່ອນປະຕິບັດຄຳຕັດສິນຂອງສານດ້ວຍບ່ອນອີງຜູ້ຖືກປະຕິບັດຄຳຕັດສິນຂອງສານເຈັບປ່ວຍໜັກ, ບັນດາອົງການປະຕິບັດຄຳຕັດສິນຂອງສານທາງແພ່ງຕ້ອງເກັບຮັກສາໄວ້ໃນສຳນວນປະ ຕິບັດຄຳຕັດສິນຂອງສານການຢັ້ງຢືນຂອງສະຖາບັນການແພດຂັ້ນເມືອງຂຶ້ນໄປ, ໃນນັ້ນລະບຸຈະແຈ້ງຊື່ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ, ສະພາບພະຍາດຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;

+ ກ່ຽວກັບກໍລະນີຜູ້ຖືກປະຕິບັດຄຳຕັດສິນຂອງສານຖືກສູນເສຍ ຫຼື ຖືກຈຳກັດຄວາມສາມາດທາງດ້ານການປະ

---

[1] ຂໍ້ a ຂອງຂໍ້ 1 ມາດຕາ 48 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງ ຂອງຫວຽດນາມ ສະບັບປັບປຸງ, ເພີ່ມເຕີມປີ 2014 ແລະ ຂໍ້ 1 ມາດຕາ 14, ດຳລັດເລກທີ 62/2015/NĐ-CP

ພິດທາງແພ່ງ.

- **ຍັງບໍ່ສາມາດກຳນົດໄດ້ທີ່ຢູ່ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ຍ້ອນເຫດຜົນພຽງພໍອື່ນທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານບໍ່ສາມາດ ປະຕິບັດພັນທະໄດ້ຕາມຄຳຕັດສິນດ້ວຍຕົນເອງ:**

ຕາມປົກກະຕິ, ກ່ອນອອກຂໍ້ຕົກລົງເລື່ອນປະຕິບັດຄຳຕັດສິນຂອງສານດ້ວຍບ່ອນອີງທີ່ວ່າຍັງບໍ່ສາມາດກຳນົດໄດ້ທີ່ຢູ່ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ, ນາຍປະຕິບັດຄຳຕັດສິນຂອງສານຕ້ອງປະຕິບັດບັນດາໜ້າວຽກລຸ່ມນີ້[2]:

+ ໄດ້ໄປເຖິງທີ່ຢູ່ໄດ້ລະບຸໃນຄຳຕັດສິນ, ຄຳຕົກລົງ. ຂໍ້ມູນກ່ຽວກັບທີ່ຢູ່ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ສະແດງໃຫ້ເຫັນໃນພາກສະເໜີຂອງບັນດາຄຳຕັດສິນ, ຄຳຕົກລົງ, ທາງຫຼັງຊື່ ແລະ ນາມສະກຸນ, ໄດ້ລະບຸທີ່ຢູ່ອາໃສຖາວອນ ຫຼື ທີ່ຢູ່ຊົ່ວຄາວ ຫຼື ບ່ອນຢູ່ຂອງຄູ່ຄວາມ. ນາຍປະຕິບັດຄຳຕັດສິນຂອງສານອີງໃສ່ທີ່ຢູ່ນີ້ເພື່ອປະຕິບັດບັນດາມາດຕະການປະຕິບັດງານໃນຂະບວນການປະຕິບັດຄຳຕັດສິນຂອງສານຄື: ກວດຜ່ານຂໍ້ຕົກລົງ, ແຈ້ງການ, ໝາຍຮຽກ, ກວດກາຢັ້ງຢືນ...

+ ຖ້າຫາກວ່າພາຍຫຼັງທີ່ໄດ້ປະຕິບັດບັນດາມາດຕະການດຳເນີນງານທີ່ກ່າວມາຂ້າງເທິງ, ນາຍປະຕິບັດຄຳຕັດສິນຂອງສານໄດ້ຮັບຂໍ້ມູນຜູ້ຖືກປະຕິບັດຄຳຕັດສິນຂອງສານບໍ່ໄດ້ຢູ່ອາໃສຢູ່ທ້ອງຖິ່ນແລ້ວ, ກໍລະນີຜູ້ຖືກປະຕິບັດຄຳຕັດສິນຂອງສານແມ່ນບຸກຄົນ, ນາຍປະຕິບັດຄຳຕັດສິນຂອງສານກວດກາຢັ້ງຢືນຜ່ານຕຳຫຼວດກວດຄົນເຂົ້າອອກຕາແສງ, ເຂດ, ເທດສະບານເມືອງເພື່ອຢັ້ງຢືນຂໍ້ມູນດັ່ງກ່າວນີ້; ກໍລະນີຜູ້ຖືກປະຕິບັດຄຳຕັດສິນຂອງສານແມ່ນວິສາຫະກິດ, ນາຍປະຕິບັດຄຳຕັດສິນຂອງສານກວດກາຢັ້ງຢືນຜ່ານຫ້ອງການຈົດທະບຽນວິສາຫະກິດ ແລະ ອົງການອາກອນເພື່ອກຳນົດຂໍ້ມູນ.

+ ກໍລະນີທີ່ບັນດາອົງການທີ່ກ່າວມາຂ້າງເທິງນີ້ສະໜອງທີ່ຢູ່ຂອງຄູ່ຄວາມຢູ່ທ້ອງຖິ່ນອື່ນ, ອອກຂໍ້ຕົກລົງມອບໝາຍປະຕິບັດຄຳຕັດສິນຂອງສານ. ກໍລະນີບັນດາອົງການທີ່ມີສິດອຳນາດທີ່ກ່າວມາຂ້າງເທິງຢັ້ງຢືນບໍ່ມີຂໍ້ມູນອື່ນ, ນາຍປະຕິບັດຄຳຕັດສິນຂອງສານເຮັດວຽກກັບຜູ້ໄດ້ຮັບການປະຕິບັດຄຳຕັດສິນຂອງສານ ອະທິບາຍໜ້າວຽກ ແລະ ຄວາມຮຽກຮ້ອງຕ້ອງການໃນການສະໜອງຂໍ້ມູນກ່ຽວກັບບ່ອນຢູ່ອາໃສອື່ນ, ຖ້າວ່າຜູ້ໄດ້ຮັບການປະຕິບັດຄຳຕັດສິນຂອງສານບໍ່ສະໜອງ, ນາຍປະຕິບັດຄຳຕັດສິນຂອງສານສະເໜີຫົວໜ້າອົງການປະຕິບັດຄຳຕັດສິນຂອງສານອອກຂໍ້ຕົກລົງເລື່ອນການປະຕິບັດຄຳຕັດສິນຂອງສານ. ກ່ຽວກັບກໍລະນີອົງການປະຕິບັດຄຳຕັດສິນຂອງສານທາງແພ່ງເປັນເຈົ້າການ ອອກຂໍ້ຕົກລົງປະຕິບັດຄຳຕັດສິນຂອງສານ, ນາຍປະຕິບັດຄຳຕັດສິນຂອງສານສະເໜີຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງອອກຂໍ້ຕົກລົງເລື່ອນການປະຕິບັດຄຳຕັດສິນຂອງສານ.

- **ຄູ່ຄວາມເຫັນດີເລື່ອນການປະຕິບັດຄຳຕັດສິນຂອງສານ:**

ບ່ອນອີງເລື່ອນດັ່ງກ່າວນີ້ໄດ້ກຳນົດໃນຂໍ້ c ຂອງຂໍ້ 1 ມາດຕາ 48 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມ ສະບັບປັບປຸງ, ເພີ່ມເຕີມປີ 2014.

ໃນເວລານຳໃຊ້ຂໍ້ກຳນົດດັ່ງກ່າວນີ້, ນາຍປະຕິບັດຄຳຕັດສິນຂອງສານຕ້ອງເອົາໃຈໃສ່ດັ່ງນີ້:

ວຽກທີ່ຄູ່ຄວາມເຫັນດີເລື່ອນການປະຕິບັດຄຳຕັດສິນຂອງສານຕ້ອງຮັບປະກັນຄວາມຕ້ອງການກ່ຽວກັບເນື້ອໃນ ແລະ ຮູບການດັ່ງນີ້:

+ ກ່ຽວກັບຮູບການ: ຕ້ອງສ້າງເປັນລານລັກອັກສອນ,ມີລາຍເຊັນຂອງທຸກຝ່າຍ.

ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງ ຫວຽດນາມປີ 2008 ພຽງແຕ່ກຳນົດການເຫັນດີເລື່ອນຕ້ອງສ້າງເປັນລາຍລັກອັກສອນ, ມີລາຍເຊັນຂອງຄູ່ຄວາມ ຊຶ່ງບໍ່ຕ້ອງມີການຢັ້ງຢືນຂອງນາຍປະຕິບັດຄຳຕັດສິນຂອງສານ ຫຼື ການ

[2] ຂໍ້ b ຂອງຂໍ້ 1 ມາດຕາ 48 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງ ຫວຽດນາມ ປັບປຸງ, ເພີ່ມເຕີມປີ 2014

ເປັນພະຍານ ຂອງບຸກຄົນທີສາມ ຫຼື ການຢັ້ງຢືນຮັບຮູ້ຂອງອົງການທີ່ມີສິດອຳນາດ. ສະນັ້ນ, ໃນກໍລະນີຮັບນິຕິກຳເຫັນດີເລື່ອນທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານນຳສະເໜີ, ນາຍປະຕິບັດຄຳຕັດສິນຂອງສານຕ້ອງກວດກາຄືນຂໍ້ມູນຈາກຝ່າຍຜູ້ໄດ້ຮັບການປະຕິບັດຄຳຕັດສິນຂອງສານເພື່ອຮັບປະກັນການເຫັນດີເລື່ອນແມ່ນເກີດຈາກຄວາມປາດຖະໜາຂອງຜູ້ໄດ້ຮັບການປະຕິບັດຄຳຕັດສິນຂອງສານ. ເພາະສະນັ້ນ, ນິຕິກຳເຫັນດີເລື່ອນຂອງຄູ່ຄວາມຕ້ອງມີທັງລາຍເຊັນຂອງຜູ້ໄດ້ຮັບການປະຕິບັດຄຳຕັດສິນຂອງສານ ແລະ ຜູ້ຖືກປະຕິບັດຄຳຕັດສິນຂອງສານ. ພ້ອມດຽວກັນນັ້ນ, ໃນເວລາຮັບຮູ້ການເຫັນດີເລື່ອນຂອງຄູ່ຄວາມ, ນາຍປະຕິບັດຄຳຕັດສິນຂອງສານກໍອາດຈະຄ່ອງແຄ້ວໃນການຮັບຮູ້ໃນບັນດານິຕິກຳທີ່ແຕກຕ່າງກັນ ຊຶ່ງບໍ່ຈຳເປັນວ່າຕ້ອງມີແຕ່ໃນເອກະສານອັນດຽວ.

ກ່ຽວກັບເນື້ອໃນ: ລະບຸຈະແຈ້ງໄລຍະເວລາເລື່ອນ.

- **ຊັບສິນເພື່ອປະຕິບັດຄຳຕັດສິນຂອງສານໄດ້ຮັບການພິຈາລະນາອະນຸມັດເພື່ອແກ້ໄຂຕາມຂໍ້ກຳນົດໃນມາດຕາ 74 ແລະ ມາດຕາ 75 ຂອງກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຂອງຫວຽດນາມ ສະບັບປັບປຸງ, ເພີ່ມເຕີມປີ 2014; ຊັບສິນທີ່ໄດ້ຂຶ້ນບັນຊີຕາມມາດຕາ 90ຂອງກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງ ຂອງຫວຽດນາມປີ 2008ແຕ່ພາຍຫຼັງທີ່ຫຼຸດຜ່ອນມູນຄ່າຕາມຂໍ້ກຳນົດ ຊຶ່ງມູນຄ່າເທົ່າກັບ ຫຼື ເກີນຄ່າໃຊ້ຈ່າຍ ແລະ ພັນທະທີ່ໄດ້ຮັບປະກັນ:**

ບ່ອນອີງໃນການເລື່ອນປະຕິບັດຄຳຕັດສິນຂອງສານນີ້ໄດ້ກຳນົດໃນຂໍ້ d ຂອງຂໍ້ 1ມາດຕາ 48 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງ ຫວຽດນາມ ສະບັບປັບປຸງ,ເພີ່ມເຕີມປີ 2014.

**(i) ກໍລະນີຊັບສິນເພື່ອປະຕິບັດຄຳຕັດສິນຂອງສານທີ່ສານໄດ້ພິຈາລະນາເພື່ອແກ້ໄຂຕາມຂໍ້ກຳນົດມາດຕາ 74 ແລະ ມາດຕາ 75 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງ ຫວຽດນາມ ສະບັບປັບປຸງ, ເພີ່ມເຕີມປີ 2014.**

ເພື່ອສະເໜີການເລື່ອນປະຕິບັດຄຳຕັດສິນຂອງສານ, ນາຍປະຕິບັດຄຳຕັດສິນຂອງສານຕ້ອງກຳນົດຈະແຈ້ງສາມບັນຫາດັ່ງນີ້:

+ ຊັບສິນເພື່ອປະຕິບັດຄຳຕັດສິນຂອງສານພິຈາລະນາເພື່ອແກ້ໄຂບໍ? ຕາມຂໍ້ກຳນົດໃນຂໍ້ 1 ມາດຕາ 174, ຂໍ້ 1 ມາດຕາ 196 ປະມວນກົດໝາຍການດຳເນີນຄະດີແພ່ງ ຫວຽດນາມປີ 2015,ໃນໄລຍະເວລາສາມວັນລັດຖະການ, ນັບແຕ່ວັນພິຈາລະນາຄະດີ, ສານຕ້ອງແຈ້ງການດ້ວຍລາຍລັກອັກສອນໃຫ້ໂຈດ, ຈຳເລີຍ, ບຸກຄົນ, ອົງການ, ການຈັດຕັ້ງທີ່ມີສິດຜົນປະໂຫຍດ, ພັນທະກ່ຽວຂ້ອງເຖິງການແກ້ໄຂຄະດີ, ໃຫ້ອົງການໄອຍະການຂັ້ນດຽວກັນສະໜອງກ່ຽວກັບວຽກທີ່ສານດັ່ງກ່າວນັ້ນພິຈາລະນາຄະດີ. ໃນຕົວຈິງ, ຢູ່ຫວຽດນາມ ນາຍປະຕິບັດຄຳຕັດສິນຂອງສານມັກຈະກວດກາການພິຈາລະນາຂອງສານດ້ວຍວິທີຮຽກຮ້ອງຄູ່ຄວາມສະເໜີແຈ້ງການພິຈາລະນາຄະດີຂອງສານ;

+ ຜູ້ຖືກປະຕິບັດຄຳຕັດສິນຂອງສານມີໜຶ່ງ ຫຼື ຫຼາຍຊັບສິນ ຕາມຂໍ້ກຳນົດຂໍ້ 2 ມາດຕາ 14 ດຳລັດເລກທີ 62/2015/NĐ-CP ຂອງຫວຽດນາມ, ກໍລະນີຄູ່ຄວາມມີຊັບສິນອື່ນນອກຈາກກໍລະນີກຳນົດໃນຂໍ້d ຂອງຂໍ້ 1 ມາດຕາ 48 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງ ຫວຽດນາມ ສະບັບປັບປຸງ, ເພີ່ມເຕີມປີ 2014, ອົງການປະຕິບັດຄຳຕັດສິນຂອງສານທາງແພ່ງແກ້ໄຂຈັດການຊັບສິນດັ່ງກ່າວນັ້ນເພື່ອປະຕິບັດຄຳຕັດສິນຂອງສານ. ສະນັ້ນ, ຖ້າວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານມີຊັບສິນຫຼາຍຢ່າງ, ອົງການປະຕິບັດຄຳຕັດສິນຂອງສານທາງແພ່ງໄດ້ເລືອກເຟັ້ນຂຶ້ນບັນຊີໜຶ່ງຊັບສິນໃນຈຳນວນຊັບສິນດັ່ງກ່າວນັ້ນ, ຊັບສິນດັ່ງກ່າວນີ້ມີຂໍ້ຂັດແຍ່ງ ແລະ ຖືກສານພິຈາລະນາເພື່ອແກ້ໄຂຂໍ້ຂັດແຍ່ງ, ອົງການປະຕິບັດຄຳຕັດສິນຂອງສານທາງແພ່ງບໍ່ອອກຂໍ້ຕົກລົງເລື່ອນການປະຕິບັດຄຳຕັດສິນຂອງສານ ຊຶ່ງຈະດຳເນີນການຂຶ້ນບັນຊີ, ແກ້ໄຂຈັດການຊັບສິນອື່ນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານເພື່ອປະຕິບັດຄຳຕັດສິນຂອງ

ສານ.

**(ii) ກໍລະນີຊັບສິນໄດ້ຂຶ້ນບັນຊີຕາມມາດຕາ 90 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມ ປີ 2008 ແຕ່ພາຍຫຼັງທີ່ຫຼຸດມູນຄ່າຕາມລະບຽບການ ຊຶ່ງມູນຄ່າເທົ່າກັບ ຫຼື ຕ່ຳກວ່າຄ່າໃຊ້ຈ່າຍ ແລະ ພັນທະທີ່ໄດ້ຄ້ຳປະກັນ.**

ນີ້ແມ່ນກໍລະນີອົງການປະຕິບັດຄຳຕັດສິນຂອງສານທາງແພ່ງໄດ້ຂຶ້ນບັນຊີຊັບສິນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານທີ່ກຳລັງຈຳນຳ, ຄ້ຳປະກັນໃຫ້ບຸກຄົນອື່ນ, ຊັບສິນດັ່ງກ່າວນີ້ໃນຊ່ວງທີ່ຂຶ້ນບັນຊີຊັບສິນມີມູນຄ່າສູງກວ່າພັນທະທີ່ໄດ້ຄ້ຳປະກັນ ແລະ ຄ່າໃຊ້ຈ່າຍໃນການບັງຄັບປະຕິບັດຄຳຕັດສິນຂອງສານແຕ່ພາຍຫຼັງຫຼຸດມູນຄ່າຊັບສິນດັ່ງກ່າວນີ້ພັດມີມູນຄ່າເທົ່າກັບ ຫຼື ຕ່ຳກວ່າຄ່າໃຊ້ຈ່າຍ ແລະ ພັນທະທີ່ໄດ້ຄ້ຳປະກັນ. ສະນັ້ນ, ນາຍປະຕິບັດຄຳຕັດສິນຂອງສານຕ້ອງສະເໜີຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງອອກຂໍ້ຕົກລົງເລື່ອນການປະຕິບັດຄຳຕັດສິນຂອງສານ. ເພື່ອອອກຂໍ້ຕົກລົງເລື່ອນດ້ວຍບ່ອນອີງດັ່ງກ່າວນີ້, ໃນສຳນວນປະຕິ ບັດຄຳຕັດສິນຂອງສານຕ້ອງການ 03 ປະເພດເອກະສານດັ່ງນີ້: (1). ຂໍ້ຕົກລົງຂຶ້ນບັນຊີຊັບສິນ; (2). ບັນດາຂໍ້ຕົກລົງ, ນິຕິກຳສະແດງໃຫ້ເຫັນການຫຼຸດລາຄາຊັບສິນ; (3). ເອກະສານຮັບຮູ້ບັນດາຈຳນວນໜີ້ສິນທີ່ມີການຄ້ຳປະກັນໂດຍແມ່ນຜູ້ຮັບຈຳນຳ, ຄ້ຳປະກັນຮັບຮູ້ ແລະ ບັນດາຄ່າໃຊ້ຈ່າຍຮອດຊ່ວງເວລາປະຕິບັດຄຳຕັດສິນຂອງສານ.

**2) ອອກຂໍ້ຕົກລົງເລື່ອນປະຕິບັດຄຳຕັດສິນຂອງສານ**

+ ສິດອຳນາດອອກຂໍ້ຕົກລົງເລື່ອນປະຕິບັດຄຳຕັດສິນຂອງສານ

ຢູ່ ຫວຽດນາມ ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງເປັນຜູ້ອອກຂໍ້ຕົກລົງປະຕິບັດຄຳຕັດສິນຂອງສານມີສິດເລື່ອນການປະຕິບັດຄຳຕັດສິນຂອງສານລວມມີຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງຂັ້ນແຂວງ (ຫົວໜ້າກົມປະຕິບັດຄຳຕັດສິນຂອງສານທາງແພ່ງ), ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງຂັ້ນເມືອງ (ຫົວໜ້າພະແນກປະຕິບັດຄຳຕັດສິນຂອງສານແພ່ງ) ແລະ ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານຂັ້ນທະຫານເຂດ.

+ ໄລຍະເວລາໃນການອອກຂໍ້ຕົກລົງເລື່ອນປະຕິບັດຄຳຕັດສິນຂອງສານ

ໃນຂໍ້ 3ມາດຕາ 48 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມປີ 2008 ກຳນົດ:

- ກ່ຽວກັບກໍລະນີກຳນົດໃນຂໍ້ 1ມາດຕາ 48ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງ ຫວຽດນາມສະບັບປັບປຸງ, ເພີ່ມ ເຕີມປີ 2014: ກຳນົດເວລາໃນການອອກຂໍ້ຕົກລົງເລື່ອນການປະຕິບັດຄຳຕັດສິນຂອງສານແມ່ນ 05 ວັນເຮັດວຽກນັບແຕ່ວັນທີ່ມີບ່ອນອີງໃນການເລື່ອນປະຕິບັດຄຳຕັດສິນຂອງສານ;

- ກ່ຽວກັບກໍລະນີທີ່ກຳນົດໃນຂໍ້ 2ມາດຕາ 48 ກົດໝາຍປະຕິບັດຄຳຕັດສິນຂອງສານຫວຽດນາມປີ 2008:ກຳນົດເວລາໃນ ການອອກຂໍ້ຕົກລົງເລື່ອນການປະຕິບັດຄຳຕັດສິນຂອງສານແມ່ນທັນທີທີ່ໄດ້ຮັບຄຳຮຽກຮ້ອງຂອງຜູ້ທີ່ມີສິດອຳນາດໃນການຄັດຄ້ານ.

+ ເນື້ອໃນຂອງຂໍ້ຕົກລົງເລື່ອນການປະຕິບັດຄຳຕັດສິນຂອງສານ

ຢູ່ຫວຽດນາມແມ່ນ ປະຕິບັດຕາມຮ່າງເນື້ອໃນຂໍ້ຕົກລົງເລື່ອນການປະຕິບັດຄຳຕັດສິນຂອງສານຕາມແບບຟອມທີ່ໄດ້ກຳນົດໄວ້, ໃນເວລາຮ່າງຕ້ອງເອົາໃຈໃສ່ບາງເນື້ອໃນດັ່ງນີ້:

- ພາກບ່ອນອີງ, ຕ້ອງລະບຸຈະແຈ້ງຈຸດ, ຂໍ້, ຂອງມາດຕາ 48ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມ ສະບັບປັບປຸງ, ເພີ່ມເຕີມປີ 2014; ລະບຸຄົບຖ້ວນ,ຊັດເຈນເລກທີຄຳຕັດສິນ, ຄຳຕົກລົງ; ວັນ, ເດືອນ, ປີ ແລະ ອົງ ການທີ່ອອກຄຳຕັດສິນ, ຄຳຕົກລົງ; ລະບຸຄົບຖ້ວນເລກທີຂໍ້ຕົກລົງປະຕິບັດຄຳຕັດສິນຂອງສານ; ວັນ, ເດືອນ, ປີ ແລະ ອົງການອອກຂໍ້ຕົກລົງປະຕິບັດຄຳຕັດສິນຂອງສານ.

- ພາກຂໍ້ຕົກລົງ, ຕ້ອງລະບຸຈະແຈ້ງບັນດາເນື້ອໃນທີ່ໄດ້ຮັບການເລື່ອນປະຕິບັດຄຳຕັດສິນຂອງສານ, ຈຸດເວລາ

ເລີ່ມຕົ້ນການເລື່ອນປະຕິບັດຄຳຕັດສິນຂອງສານ, ກຳນົດເວລາໃນການເລື່ອນປະຕິບັດຄຳຕັດສິນຂອງສານ.

- ພາກສຸດທ້າຍ, ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງເຊັນ, ລະບຸຊື່ ແລະ ນາມສະກຸນ, ຕຳແໜ່ງຂອງຜູ້ເຊັນ ແລະ ຕ້ອງໄດ້ເອົາເລກທີ,ວັນ, ເດືອນ, ປີ ແລະ ປະທັບຕາຂອງອົງການປະຕິບັດຄຳຕັດສິນຂອງສານທາງແພ່ງເພື່ອອອກຂໍ້ຕົກລົງເລື່ອນການປະຕິບັດຄຳຕັດສິນຂອງສານ.

**2. ທັກສະໂຈະປະຕິບັດຄຳຕັດສິນຂອງສານ ຢູ່ ສສ ຫວຽດນາມ**

**1) ບ່ອນອີງໂຈະປະຕິບັດຄຳຕັດສິນຂອງສານ**

- ໃນເວລາທີ່ໄດ້ຮັບຂໍ້ຕົກລົງໂຈະປະຕິບັດຄຳຕັດສິນຂອງສານຂອງຜູ້ທີ່ມີສິດອຳນາດໃນການຄັດຄ້ານຄຳຕັດສິນ, ຄຳຕົກລົງຕາມລະບຽບການອຸທອນ, ຮື້ຟື້ນ.

ຕາມຂໍ້ກຳນົດໃນຂໍ້ 1 ມດາຕາ 49 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມປີ 2008, ຂໍ້ຕົກລົງໂຈະການປະຕິບັດຄຳຕັດສິນຂອງສານຂອງຜູ້ທີ່ມີສິດອຳນາດໃນການຄັດຄ້ານຄຳຕັດສິນ, ຄຳຕົກລົງຕາມລະບຽບການລົບລ້າງ, ຮື້ຟື້ນແມ່ນໜຶ່ງໃນບັນດາບ່ອນອີງເພື່ອໃຫ້ອົງການປະຕິບັດຄຳຕັດສິນຂອງສານທາງແພ່ງໂຈະການປະຕິບັດຄຳຕັດສິນຂອງສານ. ນອກຈາກຂໍ້ 1 ມາດຕາ 49 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມປີ 2008 ກໍໄດ້ກຳນົດໃນໄລຍະເວລາໂຈະການປະຕິບັດຄຳຕັດສິນຂອງສານໂດຍຜູ້ທີ່ມີສິດອຳນາດໃນການຄັດຄ້ານ, ຜູ້ຖືກປະຕິບັດຄຳຕັດສິນຂອງສານບໍ່ຕ້ອງຮັບຜິດຊອບດອກເບ້ຽຊັກຊ້າໃນການປະຕິບັດຄຳຕັດສິນຂອງສານ.

- ໃນເວລາໄດ້ຮັບແຈ້ງການຂອງສານກ່ຽວກັບການທີ່ໄດ້ພິຈາລະນາຄຳຮ້ອງຂໍເປີດລະບຽບການລົ້ມລະລາຍຕໍ່ກັບຜູ້ຖືກປະຕິບັດຄຳຕັດສິນຂອງສານ.

ຕາມຂໍ້ກຳນົດຂໍ້ 2 ມາດຕາ 49 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມປີ 2008,ອົງການປະຕິບັດຄຳຕັດ ສິນຂອງສານທາງແພ່ງໄດ້ຮັບແຈ້ງການຂອງສານກ່ຽວກັບການພິຈາລະນາຄຳຮ້ອງຂໍເປີດລະບຽບການລົ້ມລະລາຍຕໍ່ກັບຜູ້ ຖືກປະຕິບັດຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານທາງແພ່ງອອກຂໍ້ຕົກລົງໂຈະການປະຕິບັດຄຳຕັດ ສິນຂອງສານ.

**2) ສິດອຳນາດອອກຂໍ້ຕົກລົງໂຈະປະຕິບັດຄຳຕັດສິນຂອງສານ**

- ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງໄດ້ອອກຂໍ້ຕົກລົງປະຕິບັດຄຳຕັດສິນຂອງສານມີສິດໃນການໂຈະການປະຕິບັດຄຳຕັດສິນຂອງສານໃນກໍລະນີທີ່ໄດ້ຮັບແຈ້ງການຂອງສານກ່ຽວກັບວຽກທີ່ໄດ້ພິຈາລະນາຄຳຮ້ອງຂໍເປີດລະບຽບການລົ້ມລະລາຍຕໍ່ກັບຜູ້ຖືກປະຕິບັດຄຳຕັດສິນຂອງສານ;

- ຜູ້ທີ່ໄດ້ຄັດຄ້ານຄຳຕັດສິນ, ຄຳຕົກລົງຕາມລະບຽບການລົບລ້າງ, ຮື້ຟື້ນມີສິດໃນການອອກຂໍ້ຕົກລົງໂຈະການປະຕິບັດຄຳຕັດສິນຂອງສານ.

**3) ກຳນົດເວລາອອກຂໍ້ຕົກລົງ ແລະ ແຈ້ງການໂຈະການປະຕິບັດຄຳຕັດສິນຂອງສານ**

- ກ່ຽວກັບກໍລະນີໂຈະໂດຍມີຂໍ້ຕົກລົງໂຈະການປະຕິບັດຄຳຕັດສິນຂອງສານຂອງຜູ້ທີ່ມີສິດອຳນາດໃນການຄັດຄ້ານ:

ກົດໝາຍປະຕິບັດຄຳຕັດສິນຂອງສານປີ 2008 ກຳນົດໃນກໍລະນີນີ້ ອົງການປະຕິບັດຄຳຕັດສິນຂອງສານທາງແພ່ງບໍ່ຕ້ອງອອກຂໍ້ຕົກລົງໂຈະການປະຕິບັດຄຳຕັດສິນຂອງສານ ຊຶ່ງມີແຕ່ອອກແຈ້ງການໂຈະການປະຕິບັດຄຳຕັດສິນຂອງສານ. ຍ້ອນແນວນັ້ນ, ໃນເວລາໄດ້ຮັບຂໍ້ຕົກລົງໂຈະການປະຕິບັດຄຳຕັດສິນຂອງສານຂອງຜູ້ມີສິດອຳນາດໃນການຄັດຄ້ານ, ອົງການປະຕິບັດຄຳຕັດສິນຂອງສານທາງແພ່ງຕ້ອງອອກແຈ້ງການທັນທີກ່ຽວກັບການໂຈະປະຕິບັດຄຳຕັດສິນຂອງສານ.

- ກ່ຽວກັບກໍລະນີໂຈະປະຕິບັດຄຳຕັດສິນຂອງສານເມື່ອໄດ້ຮັບແຈ້ງການຂອງສານກ່ຽວກັບການທີ່ໄດ້ຮັບພິຈາ ລະ

ນາຄຳຮ້ອງຂໍເປີດລະບຽບການລົ້ມລະລາຍ:

ໃນກຳນົດເວລາ 05 ວັນເຮັດວຽກ, ນັບແຕ່ວັນໄດ້ຮັບແຈ້ງການຂອງສານກ່ຽວກັບການຮັບພິຈາລະນາຮ້ອງຂໍເປີດລະບຽບການລົ້ມລະລາຍຕໍ່ກັບຜູ້ຖືກປະຕິບັດຄຳຕັດສິນຂອງສານ, ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງຕ້ອງອອກຂໍ້ຕົກລົງໂຈະການປະຕິບັດຄຳຕັດສິນຂອງສານ.

**4) ເນື້ອໃນຂອງແຈ້ງການໂຈະການປະຕິບັດຄຳຕັດສິນຂອງສານ, ຂໍ້ຕົກລົງໂຈະການປະຕິບັດຄຳ ຕັດສິນຂອງສານ**

- ເນື້ອໃນຂອງແຈ້ງການໂຈະການປະຕິບັດຄຳຕັດສິນຂອງສານ:

ຮ່າງເນື້ອໃນແຈ້ງການໂຈະການປະຕິບັດຄຳຕັດສິນຂອງສານຕາມແບບຟອມທີ່ກຳນົດໄວ້ໂດຍອົງການປະຕິບັດຄຳຕັດສິນຂອງສານ, ໃນເວລາຮ່າງຕ້ອງເອົາໃຈໃສ່ບາງຈຸດດັ່ງນີ້:

+ ພາກບ່ອນອີງຄົບຖ້ວນ, ຊັດເຈນເລກທີຄຳຕັດສິນ, ຄຳຕົກລົງ, ວັນ, ເດືອນ, ປີ ແລະ ອົງການອອກຄຳຕັດສິນ, ຄຳຕົກລົງ; ວັນ, ເດືອນ, ປີ ແລະ ຊື່ອົງການອອກຂໍ້ຕົກລົງປະຕິບັດຄຳຕັດສິນຂອງສານ; ເລກທີ, ວັນທີ, ເດືອນ, ປີ ແລະ ຊື່ອົງການອອກຂໍ້ຕົກລົງໂຈະການປະຕິບັດຄຳຕັດສິນຂອງສານ.

+ ພາກຂໍ້ກຳນົດໂຈະການປະຕິບັດຄຳຕັດສິນຕ້ອງລະບຸຄົບຖ້ວນ, ຊັດເຈນບັນດາຂໍ້ກຳນົດໂຈະການປະຕິບັດຄຳຕັດສິນຂອງສານ.

+ ພາກສຸດທ້າຍ, ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງລະບຸຈະແຈ້ງຊື່ ແລະ ນາມສະກຸນ, ຕຳແໜ່ງຂອງຜູ້ເຊັນ ແລະ ຕ້ອງໄດ້ເອົາເລກທີ, ວັນເດືອນ, ປີ ແລະ ປະທັບຕາເພື່ອອອກແຈ້ງການໂຈະການປະຕິບັດຄຳຕັດສິນຂອງສານ.

- ເນື້ອໃນຂອງຂໍ້ຕົກລົງໂຈະການປະຕິບັດຄຳຕັດສິນຂອງສານ:

ຢູ່ຫວຽດນາມຮ່າງເນື້ອໃນຂໍ້ຕົກລົງໂຈະການປະຕິບັດຄຳຕັດສິນຂອງສານປະຕິບັດຕາມແບບຟອມທີ່ກະຊວງຍຸຕິທຳອອກ. ໃນເວລາຮ່າງຕ້ອງເອົາໃຈໃສ່ບາງຈຸດດັ່ງນີ້:

+ ພາກບ່ອນອີງ, ຕ້ອງລະບຸຈະແຈ້ງ, ຊັດເຈນເລກທີຄຳຕັດສິນ, ຄຳຕົກລົງ, ວັນເດືອນ, ປີ ແລະ ອົງການອອກຄຳຕັດສິນ, ຄຳຕົກລົງ; ເລກທີ, ວັນ, ເດືອນ, ປີ ແລະ ຊື່ອົງການອອກຂໍ້ຕົກລົງປະຕິບັດຄຳຕັດສິນຂອງສານ; ເລກທີ, ວັນ, ເດືອນ, ປີ ຂອງແຈ້ງການພິຈາລະນາຄຳຮ້ອງຂໍເປີດລະບຽບການລົ້ມລະລາຍ.

+ ພາກຕົກລົງ, ຕ້ອງລະບຸຈະແຈ້ງການໂຈະການປະຕິບັດຄຳຕັດສິນຂອງສານກັບໃຜ; ບັນດາຂໍ້ກຳນົດໂຈະການປະຕິບັດຄຳຕັດສິນຂອງສານ, ຈຸດເວລາເລີ່ມໂຈະການປະຕິບັດຄຳຕັດສິນຂອງສານ.

+ ພາກສຸດທ້າຍ, ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງລະບຸຈະແຈ້ງຊື່ ແລະ ນາມສະກຸນ, ຕຳແໜ່ງ ແລະ ຕ້ອງໄດ້ເອົາເລກທີ, ວັນ, ເດືອນ, ປີ ແລະ ປະທັບຕາເພື່ອອອກຂໍ້ຕົກລົງໂຈະການປະຕິບັດຄຳຕັດສິນຂອງສານ.

**3. ທັກສະຢຸດຕິ (ຍົກເລີກ) ປະຕິບັດຄຳຕັດສິນຂອງສານ ຢູ່ ສສ ຫວຽດນາມ**

**1) ບ່ອນອີງຢຸດຕິ (ຍົກເລີກ) ປະຕິບັດຄຳຕັດສິນຂອງສານ**

ຢູ່ ສສ ຫວຽດນາມ ນາຍປະຕິບັດຄຳຕັດສິນຂອງສານຕ້ອງມີທັກສະເບິ່ງບັນຫາຢ່າງເລິກເຊິ່ງກ່ອນທີ່ຈະພິຈາລະນາຢຸດຕິ (ຍົກເລີກ) ການປະຕິບັດຄຳຕັດສິນຂອງສານ ຊຶ່ງສຳຄັນຕ້ອງ ອີງຕາມມາດຕາ 50 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຂອງຫວຽດນາມປີ 2014 ໄດ້ກຳນົດບັນດາບ່ອນອີງໃນການຢຸດຕິ (ຍົກເລີກ) ປະຕິບັດຄຳຕັດສິນຂອງສານດັ່ງນີ້:

- ຜູ້ຖືກປະຕິບັດຄຳຕັດສິນຂອງສານເສຍຊີວິດບໍ່ໄດ້ປະໄວ້ຊຶ່ງມໍລະດົກ ຫຼື ຕາມຂໍ້ກຳນົດຂອງກົດໝາຍພັນທະຂອງ

ບຸກຄົນດັ່ງກ່າວນັ້ນຕາມຄຳຕັດສິນ, ຄຳຕົກລົງບໍ່ສາມາດໂອນໃຫ້ຜູ້ສືບທອດໄດ້;

- ຜູ້ໄດ້ຮັບການປະຕິບັດຄຳຕັດສິນຂອງສານເສຍຊີວິດ ຊຶ່ງຕາມຂໍ້ກຳນົດຂອງກົດໝາຍສິດ ແລະ ພັນທະບຸກຄົນດັ່ງກ່າວນັ້ນຕາມຄຳຕັດສິນ, ຄຳຕົກລົງບໍ່ສາມາດໂອຍໃຫ້ຜູ້ສືບທອດ ຫຼື ບໍ່ມີຜູ້ສືບທອດ;

- ຄູ່ຄວາມໄດ້ຕົກລົງດ້ວຍລາຍລັກອັນສອນ ຫຼື ຜູ້ໄດ້ຮັບການປະຕິບັດຄຳຕັດສິນຂອງສານມີ ເອກະສານຮ້ອງຂໍອົງການປະຕິບັດຄຳຕັດສິນຂອງສານທາງແພ່ງຢຸດຕິການປະຕິບັດຄຳຕັດສິນຂອງສານໜຶ່ງສ່ວນ ຫຼື ທັງໝົດສິດ, ຜົນປະໂຫຍດທີ່ໄດ້ຮັບຕາມຄຳຕັດສິນ, ຄຳຕົກລົງ, ຍົກເວັ້ນການຢຸດຕິປະຕິບັດຄຳຕັດສິນຂອງສານສິ່ງຜົນສະທ້ອນເຖິງສິດ, ຜົນປະໂຫຍດອັນຊອບທຳຂອງບຸກຄົນທີສາມ;

- ຄຳຕັດສິນ, ຄຳຕົກລົງຖືກຍົກເລີກໜຶ່ງສ່ວນ ຫຼື ທັງໝົດ, ຍົກເວັ້ນກໍລະນີກຳນົດໃນຂໍ້ 2ມາດຕາ 103ຂອງກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງ;

- ຜູ້ຖືກປະຕິບັດຄຳຕັດສິນຂອງສານແມ່ນການຈັດຕັ້ງທີ່ໄດ້ຖືກສະຫຼາຍຕົວ, ບໍ່ເຫຼືອໄວ້ຊຶ່ງຊັບສິນ ຊຶ່ງຕາມຂໍ້ກຳນົດຂອງກົດໝາຍພັນທະຂອງເຂົາບໍ່ສາມາດໂອນໃຫ້ການຈັດຕັ້ງອື່ນໄດ້;

- ມີຂໍ້ຕົກລົງຍົກເວັ້ນພັນທະປະຕິບັດຄຳຕັດສິນຂອງສານ;

- ສານອອກຂໍ້ຕົກລົງເປີດລະບຽບການລົ້ມລະລາຍຕໍ່ກັບຜູ້ຖືກປະຕິບັດຄຳຕັດສິນຂອງສານ;

- ຜູ້ທີ່ບໍ່ທັນບັນລຸນິຕິພາວະໄດ້ມອບໝາຍອຸດໜູນລ້ຽງດູຕາມຄຳຕັດສິນ, ຄຳຕົກລົງ ໄດ້ເສຍຊີວິດ ຫຼື ໄດ້ບັນລຸນິຕິພາວະ.

**2) ສິດອຳນາດອອກຂໍ້ຕົກລົງຢຸດຕິປະຕິບັດຄຳຕັດສິນຂອງສານ**

ຕາມຂໍ້ກຳນົດໃນຂໍ້ 1 ມາດຕາ 50 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມ ສະບັບປັບປຸງ, ເພີ່ມເຕີມປີ 2014,ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງມີສິດອຳນາດໃນການອອກຂໍ້ຕົກລົງຢຸດຕິປະຕິບັດຄຳຕັດສິນຂອງສານ.

**3) ກຳນົດເວລາໃນການອອກຂໍ້ຕົກລົງຢຸດຕິປະຕິບັດຄຳຕັດສິນຂອງສານ**

ຕາມຂໍ້ກຳນົດໃນຂໍ້ 2 ມາດຕາ 50 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມ ສະບັບປັບປຸງ, ເພີ່ມເຕີມປີ 2014, ໃນກຳນົດເວລາ 05ວັນເຮັດວຽກ, ນັບແຕ່ວັນມີບ່ອນອີງໃນການຢຸດຕິປະຕິບັດຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານທາງແພ່ງຕ້ອງອອກຂໍ້ຕົກລົງຢຸດຕິປະຕິບັດຄຳຕັດສິນຂອງສານ.

**4) ເນື້ອໃນຂໍ້ຕົກລົງຢຸດຕິປະຕິບັດຄຳຕັດສິນຂອງສານ**

ຮ່າງເນື້ອໃນຂໍ້ຕົກລົງຢຸດຕິປະຕິບັດຄຳຕັດສິນຂອງສານ ຢູ່ຫວຽດນາມ ໄດ້ປະຕິບັດຕາມແບບຟອມ ທີ່ອອກໂດຍກະຊວງຍຸຕິທຳ, ໃນເວລາຮ່າງຕ້ອງເອົາໃຈໃສ່ບັນດາເນື້ອໃນດັ່ງນີ້:

- ພາກບ່ອນອີງຕ້ອງລະບຸຈະແຈ້ງບ່ອນອີງທາງດ້ານກົດໝາຍເພື່ອອອກຂໍ້ຕົກລົງຢຸດຕິປະຕິບັດຄຳຕັດສິນຂອງສານ, ນັ້ນແມ່ນບັນດາຂໍ້ບັນຍັດຂອງມາດຕາ 50 ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມ ສະບັບປັບປຸງ, ເພີ່ມເຕີມປີ 2014; ລະບຸຈະແຈ້ງເລກທີຄຳຕັດສິນ, ຄຳຕົກລົງ, ວັນ, ເດືອນ, ປີ ແລະ ຊື່ສານທີ່ໄດ້ອອກຄຳຕັດສິນ, ຄຳຕົກລົງ; ລະບຸຈະແຈ້ງເລກທີຂໍ້ຕົກລົງປະຕິບັດຄຳຕັດສິນຂອງສານ, ວັນ, ເດືອນ, ປີ ແລະ ຊື່ຂອງອົງການທີ່ໄດ້ອອກຂໍ້ຕົກລົງປະ ຕິບັດຄຳຕັດສິນຂອງສານ;

- ພາກຕົກລົງ, ຕ້ອງລະບຸຈະແຈ້ງການຢຸດຕິປະຕິບັດຄຳຕັດສິນຂອງສານຕໍ່ກັບໃຜ, ບັນດາຂໍ້ບັນຍັດຢຸດຕິ

ປະຕິບັດຄຳຕັດສິນຂອງສານຕົວຈິງແມ່ນຫຍັງ.

- ພາກສຸດທ້າຍ ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທາງແພ່ງເຊັນ, ລະບຸຊື່ ແລະ ນາມສະກຸນ,ຕຳແໜ່ງຂອງຜູ້ເຊັນ ແລະ ຕ້ອງໄດ້ເອົາເລກທີ, ວັນ, ເດືອນ, ປີ ແລະ ປະທັບຕາຂອງອົງການປະຕິບັດຄຳຕັດສິນຂອງສານທາງແພ່ງເພື່ອອອກຂໍ້ຕົກລົງປະຕິບັດຄຳຕັດສິນຂອງສານ.

**References:**


1. ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021;
2. ຕຳລາກໍ່ສ້າງວິຊາຊີບປະຕິບັດຄຳຕັດສິນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທຳແຫ່ງຊາດ, ປີ 2020;
3. ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງ ຫວຽດນາມ ປັບປຸງ, ເພີ່ມເຕີມປີ 2014;
4. ດຳລັດເລກທີ 62/2015/NĐ-CP.